ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ເລກທີ: 031.68/ສ.ວ.ນ
ນະຄອນຫຼວງວຽງຈັນ,ວັນທີ 17 ກຸມພາ 2025

# ມະຕິ
# ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
# ຄັ້ງທີ 01 ປະຈຳປີ 2025, ວັນທີ 17 ກຸມພາ 2025

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 01/2025 ໄດ້ເປີດຂຶ້ນໃນເວລາ 10:00 ໂມງ ຂອງວັນທີ 17 ກຸມພາ 2025 ທີ່ສຳນັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍເປັນປະທານຂອງ **ທ່ານ ສົມຈິດ ອິນທະມິດ** ປະທານສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ພ້ອມດ້ວຍສະມາຊິກສະພາບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

**ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:**

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງທີ 04/2024.
2. **ມະຕິ:** ເຫັນດີນຳບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2024 ແລະ ຮ່າງບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2024 ໂດຍແຕ່ງຕັ້ງໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນຜູ້ປະສານງານກັບຜູ້ກວດສອບພາຍນອກ ຫາກຮ່າງບົດລາຍງານການເງິນຂອງບໍລິສັດມີການປ່ຽນແປງໃນສ່ວນທີ່ເປັນສາລະສຳຄັນ ແມ່ນໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນຜູ້ແຈ້ງໃຫ້ສະພາບໍລິຫານຮັບຊາບອີກເທື່ອໜຶ່ງ ແຕ່ຫາກມີການແກ້ໄຂພຽງເລັກໜ້ອຍ ທີ່ບໍ່ເຮັດໃຫ້ບົດລາຍງານການເງິນມີການປ່ຽນແປງໃນສາລະສຳຄັນ ໃຫ້ຖືວ່າຮ່າງບົດລາຍງານການເງິນສະບັບດັ່ງກ່າວເປັນບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2024 ທີ່ຈະສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງຕໍ່ໄປ.
3. **ມະຕິ:** ເຫັນດີນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2025 ແລະ ໃຫ້ນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2025 ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ໄປ.
4. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເຊິ່ງມື້ດັ່ງກ່າວຈະໄດ້ກຳນົດຕໍ່ໄປໃນ **ວາລະທີ 8** ໃນອັດຕາ **42.44** ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມກົດໝາຍ ແລະ ຄັງສຳຮອງສະສົມອື່ນໆ ຕາມນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດ, ໃນອັດຕາ **120** ກີບຕໍ່ຮຸ້ນ, ເປັນຈຳນວນເງິນປັນຜົນທັງໝົດ **19,800,000,000** ກີບ ໂດຍກຳນົດວັນຈ່າຍເງິນປັນຜົນແມ່ນ 7 ພຶດສະພາ 2025.

5. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ **ບໍລິສັດ ເອິນ ແອນ ຢັ໋ງ (ລາວ) ຈຳກັດ ( Ernst & Young Lao Co., Ltd )**ເປັນຜູ້ກວດສອບບັນຊີພາຍນອກຂອງ ບໍລິສັດ ປະຈຳປີ 2024 ໂດຍມີຄ່າບໍລິການເປັນເງິນຈຳນວນເງິນ ບໍ່ກາຍ **596,266,000 ກີບ.**

6. **ມະຕິ:** ເຫັນດີໃຫ້ມີການຮຽກປະຊຸມສາມັນຜູ້ຖືຮຸ້ນ ໃນວັນທີ **10 ເມສາ 2024** ເວລາ **14.00** ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງ ວຽງຈັນ ໂດຍມີວາລະເພື່ອພິຈາລະນາ ດັ່ງຕໍ່ໄປນີ້:
   1. ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023;
   2. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2024 ແລະ ບົດ ລາຍງານການເງິນຂອງບໍລິສັດ ປະຈຳປີ 2024;
   3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2025;
   4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2024;
   5. ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີຂອງຜູ້ ກວດສອບບັນຊີພາຍນອກ ປະຈຳປີ 2025;
   6. ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານ ແທນສະມາຊິກສະພາບໍລິຫານທີ່ຄົບວາລະ;

10. **ມະຕິ:** ເຫັນດີໃຫ້ກຳນົດເອົາວັນທີ **03 ມີນາ 2025** ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດ ລາຍຊື່ຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ແລະ ຮັບເງິນປັນຜົນຈາກຜົນການດຳ ເນີນທຸລະກິດຂອງບໍລິສັດ ປະຈຳປີ 2024.

8. **ມະຕິ:** ເຫັນດີໃຫ້ແຕ່ງຕັ້ງ **ທ່ານ ອຸລາທອງ ນັນທະວົງ** ແລະ **ທ່ານ ບຸນຖົມ ຟອງວິລາດ** ໃຫ້ເປັນຜູ້ຕາງໜ້າ ບໍລິສັດຈົດທະບຽນ ເຊິ່ງມີຄວາມຮູ້ທາງດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າໃນຄະນະກວດກາກອງປະຊຸມຜູ້ ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ໃນສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນ ລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນ ລາຍຍ່ອຍ ທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນມື້ດັ່ງກ່າວ ເຊິ່ງເປັນຜູ້ຖືຮຸ້ນລາຍຍ່ອຍຄືຖືຮຸ້ນບໍ່ເກີນ 5 ສ່ວນ ຮ້ອຍຂອງຈຳນວນຮຸ້ນທີ່ຈົດທະບຽນ ແລະ ຊຳລະແລ້ວທັງໝົດ ແລະ ເປັນຜູ້ທີ່ມີຄຸນນະສົມບັດຕາມລາຍ ລະອຽດທີ່ກ່າວມາຂ້າງເທິງ.

ກອງປະຊຸມໄດ້ປິດລົງເວລາ 11:30 ໂມງ ຂອງວັນດຽວກັນ.

**ປະທານສະພາບໍລິຫານ**
**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**ທ່ານ ສົມຈິດ ອົນທະມິດ**